## ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 26 ສິງຫາ- 2007 ( 08-26-2007

---

## ໃນເມື່ອສັງຄົມປະລະທາງຂອງພຣະເຈົ້າ:

**ຂໍ້ພຣະຄັມພີໃນບົດຮຽນ:** 1 ກະສັດ 22:1-5,23:2-4,24,26-27

**ຄຳຖາມແຫ່ງຊີວິດ:** ເຮັດແນວໃດຄົນຂອງພຣະເຈົ້າຈະປ່ຽນສັງຄົມທີ່ບໍ່ເອົາພຣະເຈົ້າໄດ້?

**ຄວາມຈິງໃນພຣະຄັມພີ:** ພຣະເຈົ້າສາມາດປ່ຽນສະພາບຂອງສັງຄົມໄດ້ໃນເມື່ອຄົນຂອງພຣະເຈົ້າເອົາພຣະຄຳຂອງພຣະອົງມາໃຊ້.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນມາເພື່ອຊ່ອຍທ່ານຊອກຫາການຊ່ອຍເຫລືອຈາກພຣະເຈົ້າໃນເມື່ອປະສົບກັບສະພາບການຢ່າງໜັກໜ່ວງໂດຍ:

- ເຫັນວ່າສັງຄົມຂອງພວກເຮົາໄດ້ອຽງໄປທາງຝ່າຍໂລກ ແລະ
- ຕັດສິນໃຈເຮັດອັນໃດອັນນຶ່ງເພື່ອສົ່ງເສີມສິ່ງທີ່ພຣະເຈົ້າໃຫ້ກຽດ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ.

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ.
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ທີ່ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ.
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ.
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ.
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ.

**ບົດນຳ:** ຈົ່ງພິຈາຣະນາເບິ່ງສັງຄົມຂອງພວກເຮົາສມັຍນີ້ມີຄວາມລົດນ້ອຍຖອຍລົງທາງດ້ານວິນຍານຈິດ ແລະກໍໄປໃຫ້ກຽດແກ່ຄວາມບາບ ມັນເປັນການສືບທອດມາແຕ່ປະຖົມບູຮານພຸ້ນ.

**ຄຳຖາມ:** 1. ການໃຫ້ກຽດແກ່ຄວາມບາບຂອງສັງຄົມພວກເຮົາເປັນມາຢ່າງໃດ?

2. ໃນສັງຄົມທີ່ເຕັມໄປດ້ວຍຄວາມຜິດບາບໄດ້ເຮັດໃຫ້ຄວາມເຊື່ອໃນພຣະເຈົ້າໄດ້ຖືກປະລະເລີຍແມ່ນບໍ່?

### 1. ປາຖນາຄວາມທ່ຽງທັມ: ( 2 ກະສັດ 22:1-5)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ 2 ກະສັດ 22:1-5

2) **ອະທິບາຍ:** ສະພາບການທຸກມື້ນີ້ໄດ້ສະແດງໃຫ້ເຫັນຫລາຍສິ່ງຫລາຍຢ່າງທີ່ຄົນເຮົາຖືກດຶງອອກຈາກຄວາມສນຸກສນາກສະບາຍໃຫ້ໄປເຮັດໃນສິ່ງທີ່ບໍ່ຖືກຕ້ອງ, ນຳອອກຈາກການເປັນຄົນນອບນ້ອມຖ່ອມຕົວ. ຢ່າງໃດກໍຕາມພຣະເຈົ້າມີເງື່ອນໄຂໃຫ້ພວກເຮົາແລ່ນແຂ່ງຂັນດ້ວຍຄວາມເຊື່ອໝັ້ນໃນພຣະອົງ, ຖ້າພວກເຮົາຕັ້ງໝັ້ນຄົງຢູ່ໃນຄວາມເຊື່ອໄວ້ວາງໃຈໃນພຣະເຈົ້າ ພຣະອົງກໍຈະເອົາພວກເຮົາໄປເຂດທີ່ປອດພັຍ. ໃນຂະນະນີ້ພວກເຮົາກຳລັງປະເຊີນກັບຄວາມ ຫຍຸ້ງຍາກຫລາຍປະການຢູ່ ໃຫ້ມຸ້ງໜ້າຕໍ່ໄປ.

3) **ຄຳຖາມ:** (1) ເປັນຫຍັງບາງເທື່ອພວກເຮົາຈຶ່ງໄດ້ຮັບຄວາມທົນທຸກທໍຣະມານຈາກຄວາມຜິດບາບຂອງຄົນທີ່ມີຢູ່ກ່ອນພວກເຮົານັ້ນ?

(2) ການຊອກຫາຄວາມທ່ຽງທັມ ແລະການຕິດຕາມພຣະເຈົ້າຜ່ານທາງການເຊື່ອຟັງພຣະເຈົ້ານັ້ນເປັນການງ່າຍບໍ່?

4) **ຖ້າເວົ້າແລ້ວ:** ເວລານັ້ນກະສັດໂຢຊີອາຫາກໍໄດ້ 26 ປີລາວຍັງເປັນກະສັດທີ່ບໍ່ທ່ຽງທັມເທື່ອລາວໄດ້ສືບທອດຣາຊອານາຈັກມາຈາກສອງກະສັດທີ່ບໍ່ນັບຖືພຣະເຈົ້າ, ມານັດເສ ແລະອາໂມນ. ຈຶ່ງເຮັດໃຫ້ກະສັດໂຢຊີອາໄດ້ພົບອຸປສັກ ຢ່າງໃດກໍດີ, ທ່ານໄດ້ເປັນຜູ້ຕັດສິນໃຈສ້າງພຣະວິຫານຕໍ່ຈາກຜູ້ທີ່ບໍ່ນັບຖືພຣະເຈົ້າທີ່ໄດ້ຮັບສິນບົນໂດຍບໍ່ຖືກຕ້ອງນັ້ນ.

5) **ອະທິບາຍ:** ດັ່ງນັ້ນກະສັດໂຢຊີອາຈຶ່ງບໍ່ໄດ້ຮັບຮູ້ໃນການເປັນກະສັດຂອງທ່ານຈາກກຸ່ມສັງຄົມທີ່ບໍ່ນັບຖືພຣະເຈົ້າ. ທ່ານໄດ້ສ້າງຣາຊອານາຈັກຂອງພຣະເຈົ້າຂຶ້ນໂດຍ ເຮັດໃຫ້ພຣະວິຫານເປີະເປື້ອນໄປ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** 2 ກະສັດ 22:1-5

1. ການດຳເນີນຊີວິດຂອງທ່ານທີ່ບໍ່ມີຄວາມເຊື່ອນັ້ນເປັນສິ່ງທີ່ເຮັດງ່າຍຢູ່ບໍ່? ເປັນຫຍັງຈຶ່ງງ່າຍ? ຫລືເປັນຫຍັງຈຶ່ງບໍ່ງ່າຍ?
2. ແມ່ນສິ່ງໃດລົດຄຸນຄ່າໃນການຈົດຈໍ່ໃນຄວາມທ່ຽງທັມ ແລະການດຳເນີນຊີວິດຂອງທ່ານໃນການຜູກພັນກັບພຣະເຈົ້າ?
3. ມີທາງໃດທີ່ທ່ານສາມາດໃຊ້ຊີວິດໃຫ້ຜູກພັນກັບພຣະເຈົ້າຫລາຍຂຶ້ນໄດ້?

## 2. <u>ຍົກພຣະຄຳພຣະເຈົ້າໄວ້ທີ່ສູງ:</u> 2 ກະສັດ 23:2-3

1) ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ 2 ກະສັດ 23:2-3

2) **ຊີ້ແຈງ:** ໃນປຶ້ມຄຳໝັ້ນສັນຍາທີ່ດົນໃຈກະສັດໂຢຊີອາໄດ້ສະແດງຄວາມເສັຽໃຈໃນການກະທຳຜ່ານມາຂອງລາວພ້ອມທັງທຸກຄົນທີ່ຢູ່ໃນສມັຍຂອງລາວ ແລະໃຫ້ມີການທຳສັນຍາກັບພຣະເຈົ້າໃຫ້ຮັກສາຄຳໝັ້ນສັນຍາໄວ້ໃນປຶ້ມແຫ່ງຄຳໝັ້ນສັນຍານັ້ນ.

3) **ຄຳອະທິບາຍ:** - ຄວາມບາບຂອງກະສັດ ແລະຄົນທີ່ຢູ່ໃນສມັຍກ່ອນນັ້ນໄດ້ເຮັດໃຫ້ປຶ້ມຄຳສັນຍາເສັຽຫາຍໄປ ແລະເຮັດໃຫ້ລະດັບພຣະຄຳຄຳພຣະເຈົ້າຢູ່ໃຕ້ກົດຂອງກະສັດມານັດເສ ແລະກະສັດອາໂມນ.

4) **ຄຳຖາມ:** (1) ເປັນດ້ວຍເຫດໃດບາງເທື່ອພວກເຮົາຈຶ່ງລືມພຣະຄຳຂອງພຣະເຈົ້າ?

(2) ຍ້ອນເຫດໃດທີ່ທຳໃຫ້ພວກເຮົາສູນເສັຽພຣະຄຳຂອງພຣະເຈົ້າ? .

(3) ເປັນດ້ວຍເຫດໃດພວກເຮົາຈຶ່ງບໍ່ຍົກຣະດັບພຣະຄຳຂອງພຣະເຈົ້າໄວ້ທີ່ສູງໃນໂບດຂອງພວກເຮົາ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** 2 ກະສັດ 23:2-3

1. ທີ່ຜ່ານມາມີທາງໃດທີ່ທ່ານບໍ່ໄດ້ເອົາຫົວໃສ່ໃຈຊາຕໍ່ພຣະຄຳຂອງພຣະເຈົ້າ?

2. ມີຮູບໂຄຣົບອັນໃດແດ່ທີ່ທ່ານນັບຖືກ່ອນມານັບຖືພຣະເຈົ້າ?
3. ສິ່ງເຫລົ່ານັ້ນໄດ້ຊ່ອຍ ຫລືຕໍ່ສູ້ທ່ານ ແລະຄອບຄົວຂອງທ່ານ?

**3. <u>ເຮັດວຽກເພື່ອປ່ຽນແປງ:</u>** 2 ກະສັດ 23:4,24

1) ຂໍໃຫ້ນັກຮຽນອາສາສມັກອ່ານ 2 ກະສັດ 23:4,24
2) **ຄໍາຖາມ:** ແມ່ນຫຍັງເປັນລັກສະນະທ່າທີທົ່ວໄປທີ່ຄຣິສຕຽນໄດ້ກະທໍາ ບໍ່ຄວນເອົາສິ່ງນັ້ນເຂົ້າມາພົວພັນກັບການຕິດຕາມພຣະເຈົ້າ? ( ຄວາມເຫັນແກ່ຕົວ, ຄວາມໂມໂຫໂຫໂສ ແລະອື່ນ ໆ.)

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** 2 ກະສັດ 23:4,24

1. ໃນເວລາທ່ານຢູ່ວຽບ ໆ ທ່ານໄດ້ຈົດຈໍາຂໍ້ພຣະຄັມພີບໍ່?
2. ຖ້າບໍ່, ທ່ານຈະມີທາງໃດຈະຝຶກຝົນທ່ານເອງໃຫ້ມີຈິດໃຈພ້ອມທີ່ຈະຈື່ຈໍາຂໍ້ພຣະຄັມພີໄດ້?

**4. <u>ຮູ້ເຫັນວ່າການລົງໂທດຈະມາເຖິງ:</u>** 2 ກະສັດ 23:26-27

1) ຂໍໃຫ້ນັກຮຽນອາສາສມັກອ່ານ 2 ກະສັດ 23:26-27
2) **ຄໍາຖາມ:** ມີໃຜເຄີຍໄດ້ຍິນວ່າ ມີນັກໂທດທີ່ກໍາລັງລໍຄີວຕາຍຢູ່ໄດ້ຍອມຮັບເອົາພຣະເຢຊູເປັນພຣະຜູ້ເປັນເຈົ້າໃນຂະນະທີ່ເປັນນັກໂທດຢູ່ນັ້ນບໍ່?
3) **ອະທິບາຍ:** ຜູ້ທີ່ລໍຄີວຕາຍທີ່ໄດ້ຕ້ອນຮັບເອົາພຣະເຢຊູນັ້ນບໍ່ເປັນການທີ່ປົດປ່ອຍອອກຈາກການພິພາກສາໂທດ, ເຊັ່ນດຽວກັນ ມັນເປັນຄວາມຈິງທີ່ມີແກ່ຊົນຊາດອິສຣາເອນ; ແລະກໍເປັນຄວາມຈິງແກ່ພວກເຮົາເໝືອນກັນ.

- ເປັນຄືກັນກັບນັກໂທດທີ່ຢູ່ໃນຄີວປະຫານໄດ້ຍອມຮັບເອົາພຣະເຢຊູແລ້ວ ແຕ່ກໍຍັງຈະໄດ້ຊົດໃຊ້ໃນການກະທໍາຂອງລາວ, ພຣະເຈົ້າບໍ່ໄດ້ປັ້ນ(ປ່ຽນ)ຈາກຄວາມໂກດແຄ້ນຜູ້ທີ່ຕໍ່ສູ້ພຣະອົງຄືຄວາມຜິດບາບຂອງເຂົາທີ່ຜ່ານມາ ຢ່າງໃດກໍຕາມ, ພຣະອົງຈະເລື່ອນເວລາໄວ້ໃຫ້ກະສັດໂຢຊີອາມີຄວາມເຊື່ອເຂັ້ມແຂງຂຶ້ນ.
- ດັ່ງນັ້ນກະສັດໂຢຊີອາຈຶ່ງໄດ້ເຮັດໃຫ້ພຣະເຈົ້າພໍພຣະທັຍຫລາຍ. ການຕັດສິນຂອງພຣະເຈົ້າບໍ່ເປັນພຽງແຕ່ເໝາະສົມ, ແຕ່ພຣະອົງກໍຊົງລົງໂທດຊົນຊາດທີ່ພຣະອົງຊົງຮັກ ເໝືອນກັບພໍ່ທີ່ລົງໂທດລູກຂອງລາວ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** 2 ກະສັດ 23:26-27

1. ພຣະເຈົ້າໄດ້ເຄີຍລົງໂທດທ່ານບໍ່? ຖ້າເຄີຍ ເປັນດ້ວຍເຫດໃດ?
2. ພຣະເຈົ້າໄດ້ລົງໂທດຢ່າງຖືກຕ້ອງບໍ່?
3. ເປັນຫຍັງພຣະເຈົ້າຈຶ່ງລົງໂທດພວກເຮົາ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ການປາຖນາຄວາມທ່ຽງທັມໝາຍຄວາມວ່າ ພວກເຮົາບໍ່ພໍໃຈກັບຖານະທີ່ດໍາຣົງຢູ່ (ຢາກໃຫ້ດີຂຶ້ນອີກ )
- ພຣະຄໍາຂອງພຣະເຈົ້າເປັນຂໍກຸນແຈແຫ່ງການຟື້ນຟູຂອງປະເທດຊາດ. ພວກເຮົາຕ້ອງຊອກຫາຊ່ອງທາງຍົກພຣະຄໍາພຣະເຈົ້າຂຶ້ນໃຫ້ທຸກຄົນໄດ້ຍິນ ແລະທໍາຕາມ.
- ປ່ຽນແປງພາກສ່ວນການທໍາງານຂອງພວກເຮົາ ໝາຍເຖິງການຊອກສແວງຫາການກໍາຈັດບັນຫາສ່ວນຕົວໃນຊີວິດທີ່ມີຄວາມບາບຄວບຄຸມຢູ່ນັ້ນເອງ.
- ພວກເຮົາບໍ່ຄວນໃຫ້ການຕັດສິນທີ່ກໍາລັງຈະມາໜ່ວງໜ່ຽວໃນການທໍາງານໃນສິ່ງທີ່ຖືກຕ້ອງຕາມນໍ້າພຣະທັຍຂອງພຣະເຈົ້າຂອງເຮົາ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ. www.lsbf.org. by JH